# ການຊ່ວຍເຫຼືອ PICSA ປ່ຽນອະນາຄົດຂອງນາງສອນ:
## ເລີ່ມຈາກບໍ່ມີຫຍັງສູ່ ຄວາມສຳເລັດ



ນາງ ສອນ ໄຊຍະວົງ ອາຍຸ 31 ປີ ເກີດຢູ່ບ້ານ ນານິກ ເມືອງທົ່ງມີໄຊ ແຂວງ ໄຊຍະບູລີ. ອາໃສຢູ່ກັບຄອບຄົວແຕ່ງງານ ມີລູກໜຶ່ງຄົນອາຍຸ 11 ປີ. ເພາະເນື່ອງຈາກວ່າ ການເຂົ້າມາຂອງ ໂຄງການ PICSA ຊ່ວຍເຮັດໃຫ້ມີການປັບປຸງລາຍຮັບດີຂຶ້ນ.

**ສິ່ງທ້າທາຍ:** ນາງ ສອນເກີດຢູ່ບ້ານນານິກ ລະດັບການສຶກສາ ແມ່ນຮຽນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ຄອບຄົວປະກອບ ອາຊີບປູກຝັງເປັນຕົ້ນຕໍ ແລະ ລ້ຽງສັດປີກຈຳນວນໜຶ່ງ. ຜ່ານມາ ຄອບຄົວແມ່ນຕົກຢູ່ໃນພາວະຂາດແຄນສະບຽງອາຫານ ເຊິ່ງຂາດເຂົ້າກິນເປັນປະຈຳທຸກປີ ຢ່າງນ້ອຍ 2 ເດືອນ ແລະ ບໍ່ມີ ຄວາມໝັ້ນຄົງດ້ານສະບຽງອາຫານ. ໃນເມື່ອກ່ອນ ນາງສອນ ພະຍາຍາມລ້ຽງສັດປີກເພື່ອຊ່ວຍສ້າງລາຍຮັບໃຫ້ແກ່ຄອບຄົວ ແຕ່ກໍ່ບໍ່ປະສົບຜົນສຳເລັດເພາະເນື່ອງຈາກວ່າມີເປັດໄກ່ບໍ່ຫຼາຍໂຕ ແລະ ມັນກໍ່ບໍ່ມີການຂະຫຍາຍຕົວຢ່າງເຕັມທີ່.

**ການປ່ຽນແປງລາຍຮັບດີກວ່າເກົ່າ**

ຕົກມາໃນ ເດືອນກໍລະກົດ ປີ 2022, ນາງສອນ ໄດ້ສະໝັກໃຈເຂົ້າຮ່ວມກິດຈະກຳດ້ານ ໂພຊະນາການຂອງໂຄງການ PICSA ແລະ ໄດ້ມີໂອກາດໄດ້ຮັບການຝຶກອົບຮົມຄວາມຮູ້ດ້ານ ໂພຊະນາການ, ເຕັກນິກການປູກການລ້ຽງ ແລະ ການປຸງແຕ່ງ ອາຫານທີ່ມີຄຸນ ປະໂຫຍດດ້ານໂພຊະນາການ. ຈາກນັ້ນລະຫວ່າງ ເດືອນຕຸລາ 2022 ຄອບຄົວຂອງລາວກໍ່ໄດ້ຮັບເງິນສະໜັບສະໜູນ ເພື່ອການຜະລິດມູນຄ່າ 1 ລ້ານກີບ. ດ້ວຍຈຳນວນເງິນດັ່ງກ່າວນາງສອນ ໄດ້ໝູນໃຊ້ຈັດຊື້ສັດປີກ ເພື່ອຕໍ່ຍອດການລ້ຽງ ເຊິ່ງສາມາດຊື້ໄກ່ເພີ້ມ ອີກເປັນຈຳນວນ 60 ໂຕ, ເປັດ 12 ໂຕ. ເຊິ່ງການລ້ຽງສັດປີກເລົ່ານີ້ ແມ່ນຊ່ວຍເຮັດໃຫ້ຄ້ຳປະກັນ ສະບຽງອາຫານໃນຄົວເຮືອນ ແລະ ກໍ່ເປັນການສ້າງລາຍຮັບໃຫ້ແກ່ ຄອບຄົວອີກດ້ວຍ.

**ການນຳໃຊ້ທຶນໝູນວຽນ**

ດ້ວຍມູນຄ່າຂອງການຊ່ວຍເຫຼືອເບື້ອງຕົ້ນ ນາງສອນ ໄດ້ລົງທຶນໃສ່ຂະຫຍາຍຕາໜ່າງຈຳນວນຝູງສັດປີກໃຫ້ຫລວງຫລາຍ ເພິ່ນໄດ້ຊື້ໄກ່ເພີ້ມອີກ 5 ໂຕ ແລະ ເປັດອີກ 5 ໂຕ ນອກນັ້ນ ແມ່ນຊື້ແນວ ພັນພືດ ແລະ ຫົວອາຫານສັດເພີ້ມອີກຈຳນວນໜຶ່ງ. ຜ່ານການປູກການລ້ຽງດັ່ງ ມາເຖິງປະຈຸບັນເພິ່ນໄດ້ຂາຍສັດປີກອອກສູ່ ຕະຫຼາດຂອງຊຸມຊົນ ສາມາດສ້າງລາຍຮັບໄດ້ເທົ່າກັບ 50.000 ກີບ/ຕໍ່ກິໂລ ແລະ ເປັດ 40.000 ກີບ/ກິໂລ. ໂດຍສະເລ່ຍຂາຍໄກ່ທັງໝົດ 15 ກິໂລກຣາມ ແລະ ຂາຍເປັດ 10 ກິໂລກຣາມ ລວມມູນຄ່າເທົ່າກັບ 1,15 ລ້ານກີບ. ຕໍ່ກັບຈຳນວນເງິນທີ່ຫາໄດ້ແມ່ນໄດ້ນຳເອົາໄປ ລົງທຶນໃຫມ່ອີກຮອບໃຫມ່.

**ສິ່ງທ້າທ້າຍຕໍ່ຜົນສຳເລັດ**

ຖ້າຖາມວ່າການລ້ຽງສັດມີຜົນກະທົບດ້ານລົບແນວໃດແດ່ ແນ່ນອນ ມັນກໍ່ມີສິ່ງທ້າທາຍຫລາຍຢ່າງ ບາງເທື່ອສັດປີກຕາຍຍ້ອນວ່າສະພາບ ອາກາດມີການປ່ຽນແປງ. ເຖິງແມ່ນວ່າຈະມີອຸປະສັກຫລາຍປານ ໃດກໍ່ຕາມແຕ່ນາງກໍ່ບໍ່ທໍ້ຖອຍ ແຕ່ຈະຍັງຄົງຍຶດໝັ້ນຕັ້ງໃຈຕໍ່ໄປ.

**ດ້ວຍຄວາມພາກພູມໃຈ**

ຕໍ່ກັບການຊ່ວຍເຫລືອເບື້ອງຕົ້ນ ນາງສອນ ໄດ້ກ່າວເພື່ອສະແດງຄຳຂອບໃຈ ມາຍັງໂຄງການ "ການສະໜັບສະໜູນທຶນເບື້ອງຕົ້ນ ແມ່ນເປັນຄັ້ງທຳອິດທີ່ ຄອບຄົວເຮົາໄດ້ຮັບ ແລະ ບໍ່ເຄີຍຮັບຈາກໂຄງການໃດມາກ່ອນເລີຍ ສະນັ້ນ ຈຶ່ງສະແດງຄວາມຂອບໃຈອີກເທື່ອໜຶ່ງມາຍັງ ໂຄງການ PICSA ຢ່າງຫລົ້ນເຫລືອອີກເທື່ອໜຶ່ງ" ນັ້ນກໍ່ຍ້ອນທຶນຊ່ວຍເຫລືອເບື້ອງຕົ້ນ ມັນໄດ້ ຊ່ວຍຕໍ່ຍອດໃຫ້ພວກຂ້າເຈົ້າມີທຶນຮອນ ແລະ ຮັບປະກັນດ້ານສະບຽງ ອາຫານ ໂດຍຜ່ານ ທຸລະກິດຄົວເຮືອນເຊັ່ນການລ້ຽງສັດປີກຂະໜາດ ນ້ອຍໃນຄົວເຮືອນ ມັນຊ່ວຍສ້າງລາຍຮັບ ແລະ ປັບປຸງຊີວິດການເປັນ ຢູ່ຂອງຂ້າພະເຈົ້າດີຂຶ້ນເລື້ອຍມາ. ຈາກບົດເລື່ອງເລົ່າແຫ່ງຄວາມສຳເລັດ ສະທ້ອນໃຫ້ເຫັນຍາມໃດ ໂຄງການ PICSA ຍັງຕັ້ງໃຈສ້າງການປ່ຽນແປງ ດ້ານບວກໃຫ້ແກ່ຊຸມຊົນ ແລະ ຜູ້ໄດ້ຮັບຜົນປະໂຫຍດສະເໝີ.



# Rising from Scarcity to Success: Mrs. Sone's PICSA Journey



*Meet Mrs. Sone Xayavong, a 31-year-old resident of Nanok village in Thongmixay district, Xayabouly province. She lives with her husband and a 11-year-old son. Thanks to the PICSA project, her life has taken a remarkable turn for the better.*

***A Challenging Beginning***

*Mrs. Sone was born in Nanok village and completed her secondary education. Her family relied on farming and had limited livestock. Growing up, they often faced food shortages, enduring up to two months of uncertainty. Mrs. Sone tried poultry raising earlier, but she had just a few chickens and ducks. She couldn't afford to buy more, and her birds often didn't make it.*

***A Change for the Better***

*In July 2022, the PICSA project came to her village and selected Mrs. Sone's household for nutrition training. After completing the training, she received a grant of 1 million LAK in October 2022. She now raises 60 chickens and 12 ducks, which not only feed her family but also provide income for her household. She faces no more food shortages!*

***Investing in the Future***

*With her grant, Mrs. Sone wisely invested in her chicken and duck flock. She purchased five chickens and five ducks, along with seeds for her home garden and feed for her birds. She now sells her birds in the village market, earning 50,000 LAK per kilogram for chickens and 40,000 LAK per kilogram for ducks. She has sold approximately 15 kilograms of chicken and 10 kilograms of duck earning approximately a sum of 1.15 million LAK which she partially re-invests in replenishing her poultry flock.*

***Challenges and Success***

*Of course, there have been challenges. A few of her chickens didn't survive due to bad weather. But despite these setbacks, Mrs. Sone remains positive and determined.*

***A Message of Gratitude***

*With a beaming smile, Mrs. Sone expresses her gratitude, saying, "It is the first time that I have received help from any project, and thus I would like to thank the PICSA project for helping me."*

*Thanks to the PICSA project, Mrs. Sone's life has transformed. She has overcome food shortages, built a thriving chicken and duck business, and improved her family's nutrition. Her success story is an inspiring example of how PICSA project can make a real difference in beneficiaries lives.*

